mnvotes.gov

1-877-600-VOTE (8683)

MN Relay Service: 711

secretary.state@state.mn.us

## ຂໍສະແດງຄວາມຍິນດີ, ທ່ານຈະໄດ້ລົງທະບຽນເພື່ອລົງຄະແນນສຽງ!

ຕາມເອກະສານໃບສະຫມັກໃບຂັບຂີ່ຫຼືບັດປະຈຳຕົວຂອງລັດທີ່ຫາກ່ອນຜ່ານມາຂອງທ່ານ, ທ່ານຈະໄດ້ລົງທະບຽນເພື່ອລົງຄະແນນສຽງໃນລັດມິນເນໂຊຕາ.

### ທ່ານມີ 2 ທາງເລືອກ

- **ບໍ່ເຮັດຫຍັງ**ແລະທ່ານຈະໄດ້ຮັບການລົງທະບຽນເພື່ອລົງຄະແນນສຽງ. ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານຈະສົ່ງບັດລົງຄະແນນສຽງໃຫ້ທ່ານທາງໄປສະນີ ພ້ອມຂໍ້ມູນເຂດເລືອກຕັ້ງ, ແລະສະຖານທີ່ປ່ອນບັດ.
- **ປະຕິເສດການລົງທະບຽນ**ຖ້າທ່ານບໍ່ຕ້ອງການລົງທະບຽນ ຫຼືທ່ານບໍ່ມີສິດລົງຄະແນນສຽງ (ເບິ່ງທາງຫລັງສຳລັບລາຍລະອຽດ). ສົ່ງແບບຟອມລຸ່ມນີ້ພາຍໃນ 20 ວັນ ນັບຈາກວັນທີສົ່ງຈົດໝາຍສະບັບນີ້ ແລະທ່ານຈະບໍ່ຖືກລົງທະບຽນເພື່ອລົງຄະແນນສຽງ.

---

## ຖ້າຫາກວ່າທ່ານບໍ່ຕ້ອງການລົງທະບຽນເພື່ອລົງຄະແນນສຽງ

ຫມາຍກ່ອງຂ້າງລຸ່ມນີ້, ເຊັນຊື່, ແລະສົ່ງແບບຟອມນີ້ຄືນຖ້າທ່ານບໍ່ມີສິດລົງຄະແນນສຽງ (ເບິ່ງທາງຫລັງສຳລັບລາຍລະອຽດ) ຫຼືທ່ານບໍ່ຕ້ອງການລົງທະບຽນ.

| | |
|---|---|
| **1** | ☐ ອີງຕາມກົດຫມາຍລັດມິນເນໂຊຕາ 201.161 ຂໍ້ຍ່ອຍ 2, ຂ້າພະເຈົ້າປະຕິເສດການລົງທະບຽນຫຼື ລົງທະບຽນລ່ວງໜ້າເພື່ອລົງຄະແນນສຽງໃນລັດມິນເນໂຊຕາ. ຫຼື, ຖ້າຫຼາຍກວ່າ 20 ມື້ນັບຈາກວັນທີສົ່ງຈົດໝາຍ, ແລະຂ້າພະເຈົ້າໄດ້ລົງທະບຽນເພື່ອລົງຄະແນນສຽງແລ້ວ, ຂ້າພະເຈົ້າຂໍໃຫ້ລົບບັນທຶກການລົງຄະແນນສຽງຂອງຂ້າພະເຈົ້າຖິ້ມອອກ ອີງຕາມກົດຫມາຍລັດມິນເນໂຊຕາ 201.13 ຂໍ້ຍ່ອຍ 4. |
| **2** | ຂ້າພະເຈົ້າສາບານຫລືຢືນຢັນວ່າຂ້າພະເຈົ້າແມ່ນຜູ້ທີ່ໄດ້ປະກອບແບບຟອມນີ້.<br>ລາຍເຊັນ<br>X |
| **3** | ສົ່ງແບບຟອມນີ້ຄືນ<br>ໃຊ້ຊອງຈົດໝາຍທີ່ສະໜອງໃຫ້, ອີເມລ, ຫຼືແຟັກ. |

ປິ່ນອີກຂ້າງສຳລັບຂໍ້ມູນເພີ່ມເຕີມ →

## ໃນລັດມິນເນໂຊຕາ, ທ່ານມີສິດລົງທະບຽນເພື່ອລົງຄະແນນສຽງຖ້າທ່ານ...

- ມີອາຍຸຢ່າງໜ້ອຍ 16 ປີ ເພື່ອຈະລົງທະບຽນລົງຄະແນນສຽງລ່ວງໜ້າ ແລະຢ່າງໜ້ອຍ 18 ປີໃນມື້ເລືອກຕັ້ງທີ່ທ່ານຕັ້ງໃຈລົງຄະແນນສຽງ.
- ເປັນພົນລະເມືອງສະຫະລັດ
- ມີທີ່ຢູ່ອາໄສຢູ່ໃນລັດມິນເນໂຊຕາຢ່າງໜ້ອຍ 20 ມື້ກ່ອນວັນເລືອກຕັ້ງ
- ບໍ່ໄດ້ຢູ່ພາຍໃຕ້ການຄຸ້ມຄອງຕາມຄຳສັ່ງສານທີ່ມີຄຳສັ່ງຖອນສິດການລົງຄະແນນສຽງເລືອກຕັ້ງຂອງທ່ານ
- ຍັງບໍ່ທັນໄດ້ມີຄຳສັ່ງຈາກສານວ່າທ່ານບໍ່ມີຄວາມສາມາດໃນການລົງຄະແນນສຽງຕາມກົດໝາຍ
- ປະຈຸບັນບໍ່ໄດ້ຖືກກັກຂັງໃນຄຸກຍ້ອນວ່າເຮັດຜິດຖືກຕັດສິນໂທດທາງອາຍາ

**ຖ້າທ່ານບໍ່ມີຄຸນສົມບັດຕາມເງື່ອນໄຂຂ້າງເທິງນີ້ ປະຕິເສດການລົງທະບຽນໂດຍໃຊ້ແບບຟອມໃນອີກດ້ານໜຶ່ງ.**

## ສິ່ງທີ່ທ່ານຕ້ອງຮູ້

- ຜູ້ທີ່ເຮັດປະກອບໃບຄຳຮ້ອງສະຫມັກຢູ່ບ່ອນອົງການລັດທີທີ່ມີອຳນາດ ແລະສະຫນອງເອກະສານສັນຊາດສະຫະລັດຈະໄດ້ຮັບການລົງທະບຽນເພື່ອລົງຄະແນນສຽງອັດຕະໂນມັດ
- ລົງທະບຽນໂດຍບໍ່ຊັກຊ້າທາງອອນໄລນ໌ທີ່ mnvotes.gov/register ຫຼືທີ່ຫ້ອງການເລືອກຕັ້ງເຂດຂອງທ່ານ
- ຫມົດເວລາລົງທະບຽນລ່ວງຫນ້າແມ່ນ 21 ມື້ກ່ອນວັນເລືອກຕັ້ງ. ຢ່າງໃດກໍ່ຕາມ, ທ່ານສາມາດລົງທະບຽນໃນວັນເລືອກຕັ້ງທີ່ບ່ອນປ່ອນບັດຂອງທ່ານກໍ່ໄດ້. ເຂົ້າໄປທີ່ *mnvotes.gov* ເພື່ອຮຽນຮູ້ວ່າທ່ານຈະຕ້ອງລົງທະບຽນເອກະສານ ແລະບັດປະຈຳຕົວຫຍັງແດ່
- ຂໍ້ມູນການລົງທະບຽນຜູ້ລົງຄະແນນສຽງບາງອຍ່າງແມ່ນຂໍ້ມູນສາທາລະນະເມື່ອນຳໃຊ້ສຳລັບການເລືອກຕັ້ງ, ທາງດ້ານການເມືອງ, ການບັງຄັບໃຊ້ກົດຫມາຍ ຫຼືຈຸດປະສົງການຄັດເລືອກຄະນະລູກຂຸນລູກຂຸນ. ຖ້າທ່ານມີຄວາມກັງວົນກ່ຽວກັບຄວາມປອດໄພສ່ວນບຸກຄົນ, ທ່ານສາມາດເກັບຂໍ້ມູນຕິດຕໍ່ຂອງທ່ານໃຫ້ເປັນສ່ວນຕົວໄດ້. ໂທຫາ 1-877-600-8683 ເພື່ອສຶກສາເພີ່ມເຕີມ

**ເຂົ້າໄປເບິ່ງທີ່ mnvotes.gov** ເພື່ອຊອກຫາບ່ອນລົງຄະແນນສຽງ, ສະໝັກຂໍບັດເລືອກຕັ້ງທາງໄປສະນີ, ເບິ່ງຕົວຢ່າງການລົງຄະແນນສຽງ, ອັບເດດການລົງທະບຽນຂອງທ່ານ, ແລະອື່ນໆ.

## ແຫຼ່ງຂໍ້ມູນການລົງທະບຽນຜູ້ລົງຄະແນນສຽງໃນພາສາອື່ນ

ຂໍ້ມູນນີ້ແມ່ນມີຢູ່ໃນພາສາເຫຼົ່ານີ້ຢູ່ mnvotes.gov/register ຫຼືໂດຍການສະແກນລະຫັດ QR ນີ້.

| | | | | |
|---|---|---|---|---|
| Español | Soomaali | Русский | ພາສາລາວ | ខ្មែរ |
| Hmoob | Tiếng Việt | 中文 | Oromo | አማርኛ |

ປິ້ນອີກຂ້າງສຳລັບທາງເລືອກອື່ນໆ →